ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

Lao People’s Democratic Republic

Peace Independence Democracy Unity Prosperity

# ບົດລາຍງານສະຖິຕິການເງິນແຫ່ງລັດປະຈຳ 9 ເດືອນ ປີ 2019

# Government Finance Statistics

# Quarter 3 Report for 2019






ກະຊວງການເງິນ, ກົມນະໂຍບາຍການເງິນ ແລະ ນິຕິກຳ

Ministry of Finance, Fiscal Policy and Law Department

# ບົດລາຍງານສະຖິຕິການເງິນແຫ່ງລັດປະຈຳ 9 ເດືອນ ປີ 2019

## I. ສະພາບລວມການຈັດຕັ້ງປະຕິບັດງົບປະມານປະຈຳ 9 ເດືອນ ປີ 2019

ບົດລາຍງານສະບັບນີ້ ໄດ້ຮອບຮອມຂໍ້ມູນການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳ 9 ເດືອນ ປີ 2019 ຕາມມາດຕະຖານສາກົນ GFS (ເຊິ່ງລາຍຮັບບໍ່ໄດ້ລວມເອົາລາຍຮັບຈາກການຂາຍຊັບສິນ ແລະ ລາຍຮັບເກັບຄືນຕົ້ນທຶນເງິນກູ້ຢືມປ່ອຍຕໍ່ ນັບຕັ້ງແຕ່ເດືອນມັງກອນ ເຖິງ ເດືອນ ກັນຍາ ປີ 2019) ແລະ ຍັງໄດ້ສົມທຽບກັບໄລຍະດຽວກັນຂອງປີຜ່ານມາ ເພື່ອໃຫ້ເຂົ້າໃຈເຖິງຄວາມຄືບໜ້າຂອງການຈັດຕັ້ງປະຕິບັດງົບປະມານໃນແຕ່ລະໄລຍະ ແລະ ເພື່ອເປັນຂໍ້ມູນເບື້ອງຕົ້ນຮັບໃຊ້ໃນການສຶກສາຄົ້ນຄວ້າຕ່າງໆ.

ໃນໄລຍະ 9 ເດືອນ ປີ 2019, ລາຍຮັບງົບປະມານທັງໝົດສາມາດບັນລຸໄດ້ 16.140 ຕື້ກີບ (ທຽບໄດ້ 9,8% ຂອງ GDP ຫຼື 61,6% ຂອງແຜນງົບປະມານ) ຊຶ່ງປະກອບມີ ລາຍຮັບພາຍໃນ ແລະ ລາຍຮັບຈາກການຊ່ວຍເຫຼືອລ້າ, ເມື່ອປຽບທຽບ (ໄລຍະດຽວກັນໃນປີ 2018) ເພີ່ມຂຶ້ນ 0,8% ສາເຫດທີ່ການຈັດເກັບງົບປະມານເພີ່ມຂຶ້ນແມ່ນເນື່ອງມາຈາກການຈັດເກັບລາຍຮັບພາຍໃນເພີ່ມຂຶ້ນ 6,1% ໂດຍສະເພາະແມ່ນ ລາຍຮັບຈາກພາສີ-ອາກອນ ທີ່ຈັດເກັບໄດ້ເພີ່ມຂຶ້ນ 7,6% ທຽບໃສ່ໄລຍະດຽວກັນຂອງປີ 2018 (ຕາຕະລາງ 1).

ສ່ວນລາຍຈ່າຍງົບປະມານ ໃນໄລຍະ 9 ເດືອນ ຂອງປີ 2019 ມີຈັງຫວະຫຼຸດລົງ, ຊຶ່ງສາມາດປະຕິບັດໄດ້ 18.501 ຕື້ກີບ (ທຽບໄດ້ 11,2% ຂອງ GDP ຫຼື 55,4% ຂອງແຜນງົບປະມານ) ຊຶ່ງສາເຫດມາຈາກການຫຼຸດລົງຂອງລາຍຈ່າຍບໍລິຫານປົກກະຕິ ແລະ ລາຍຈ່າຍການລົງທຶນຂອງລັດ. (ລາຍຈ່າຍລົງທຶນຂອງລັດຍັງບໍ່ທັນມີຂໍ້ມູນລາຍຈ່າຍລົງທຶນ ທີ່ກະຊວງແຜນການ ແລະ ການລົງທຶນ ຄຸ້ມຄອງ) ເມື່ອທຽບກັບປີ 2018 ເຫັນວ່າ ລາຍຈ່າຍງົບປະມານທັງໝົດຫຼຸດລົງ 15,5%, ໃນນັ້ນ ລາຍຈ່າຍລົງທຶນ ຫຼຸດລົງ 44,2% ທຽບໃນໄລຍະດຽວກັນຂອງປີ 2018 (ຕາຕະລາງ 1).

ອີງຕາມຜົນການຈັດຕັ້ງປະຕິບັດໃນຄັ້ງນີ້ ຊີ້ໃຫ້ເຫັນວ່າ ໃນໄລຍະ 9 ເດືອນຂອງປີ 2019, ການດຸ່ນດ່ຽງລາຍຮັບພາຍໃນຕໍ່ລາຍຈ່າຍທັງໝົດ ຍັງຂາດດຸນ ປະມານ 2.839 ຕື້ກີບ ຫຼື 1,7% ຂອງ GDP ຊຶ່ງຖືວ່າປະຕິບັດໄດ້ດີ ເມື່ອທຽບກັບປີທີ່ຜ່ານມາ ທີ່ມີການຂາດດຸນ ປະມານ 7.137 ຕື້ກີບ ຫຼື 4,2% ຂອງ GDP. ພ້ອມນັ້ນ, ດຸນງົບປະມານລວມແມ່ນມີຈັງຫວະດີຂຶ້ນເລັກນ້ອຍ ຊຶ່ງກຳນົດໃນໄລຍະ 9 ເດືອນປີ 2019, ງົບປະມານລວມຂາດດຸນຈຳນວນ -2.361 ຕື້ກີບ ຫຼື ເທົ່າກັບ -1,4% ຂອງ GDP (ຕາຕະລາງ 1).

**ເສັ້ນສະແດງ 1:** ການຈັດຕັ້ງປະຕິບັດງົບປະມານໄລຍະ 9 ເດືອນ ປີ 2018 ແລະ 2019 ທຽບໃສ່ GDP




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

## II. ການຈັດຕັ້ງປະຕິບັດລາຍຮັບງົບປະມານທັງໝົດປະຈໍາ 9 ເດືອນ ປີ 2019

ໃນໄລຍະ 9 ເດືອນ ປີ 2019, ການຈັດຕັ້ງປະຕິບັດລາຍຮັບງົບປະມານທັງໝົດສາມາດປະຕິບັດໄດ້ 16.140 ຕື້ກີບ (ເທົ່າ 61,6% ຂອງແຜນງົບປະມານ ຫຼື ເທົ່າກັບ 9,8% ຂອງ GDP) ຊຶ່ງໄດ້ເພີ່ມຂຶ້ນ 0.8% ຈາກໄລຍະດຽວກັນໃນປີ 2018. ລາຍຮັບພາຍໃນປະຕິບັດໄດ້ 15.661 ຕື້ກີບ ທຽບໄດ້ 64,9% ຂອງແຜນງົບປະມານ ຫຼື ເທົ່າກັບ 9,5% ຂອງ GDP ແລະ ກວມເອົາ 97,0% ຂອງລາຍຮັບທັງໝົດ. ໃນນັ້ນ, ລາຍຮັບຈາກພາສີອາກອນ ເພີ່ມຂຶ້ນ 7,6% ເມື່ອທຽບກັບໄລຍະດຽວກັນໃນປີ 2018 ຊຶ່ງສາເຫດມາຈາກການປະຕິຮູບ ແລະ ການຫັນເປັນທັນສະໄໝ ໃນການຈັດເກັບ ພາສີ-ອາກອນ ແລະ ປະຕິບັດຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບປັບປຸງ (ປີ 2018) ທີ່ຫັນຫົວໜ່ວຍທຸລະກິດ ທີ່ມີ ລາຍຮັບ 400 ລ້ານກີບ ຕໍ່ ປີ ຂຶ້ນໄປ ເຂົ້າສູ່ລະບົບອາກອນມູນຄ່າເພີ່ມ ເຮັດໃຫ້ ລາຍຮັບ ອາກອນມູນຄ່າເພີ່ມ ເພີ່ມຂຶ້ນ 10% ທຽບໃສ່ໄລຍະດຽວກັນຂອງປີ 2018, ແຕ່ລາຍຮັບບໍ່ແມ່ນພາສີອາກອນ ຫຼຸດລົງ 0,8% ເມື່ອທຽບກັບໄລຍະດຽວກັນໃນປີ 2018 ເນື່ອງຈາກ ລາຍຮັບຈາກຄ່າປັບໃໝ ແລະ ລາຍຮັບບໍລິຫານວິຊາການ ຫຼຸດລົງ. ນອກຈາກນີ້, ລາຍຮັບຈາກການຊ່ວຍເຫຼືອລ້າບັນລຸ 479 ຕື້ກີບ ຫຼື ເທົ່າກັບ 23,2% ຂອງແຜນງົບປະມານ ເຫັນວ່າ ຫຼຸດລົງ 61,5% ເມື່ອທຽບກັບໄລຍະດຽວກັນຂອງປີ 2018. (ເນື່ອງຈາກບໍ່ທັນມີຂໍ້ມູນບົດສະຫຼຸບເງິນຊ່ວຍເຫຼືອລ້າໄລຍະ 9 ເດືອນ ທີ່ບໍ່ຕິດພັນກັບໂຄງການ ທີ່ກະຊວງແຜນການ ແລະ ການລົງທຶນຄຸ້ມຄອງ)

**ຕາຕະລາງ 1: ການຈັດຕັ້ງປະຕິບັດງົບປະມານໃນໄລຍະ 9 ເດືອນ ປີ 2019 ທຽບກັບໄລຍະດຽວກັນໃນປີ 2018**

| (ຫົວໜ່ວຍ ຕື້ກີບ) | ມັງກອນ-ກັນຍາ 2018 | % ຕໍ່ແຜນ ງົບປະມານ 2018 | % ຕໍ່ GDP 2018 | ມັງກອນ-ກັນຍາ 2019 | % ຕໍ່ແຜນ ງົບປະມານ 2019 | % ຕໍ່ GDP 2019 | % ການ ປ່ຽນແປງ |
|---|---|---|---|---|---|---|---|
| ລາຍຮັບທັງໝົດ | 16.007 | 64,5% | 10,5% | 16.140 | 61,6% | 9,8% | 1,0% |
| ລາຍຮັບພາຍໃນ | 14.764 | 66,9% | 9,7% | 15.661 | 64,9% | 9,5% | 6,1% |
| ລາຍຮັບຈາກພາສີ-ອາກອນ | 12.109 | 67,9% | 7,9% | 13.027 | 69,5% | 7,9% | 7,6% |
| ລາຍຮັບບໍ່ແມ່ນພາສີ-ອາກອນ | 2.655 | 62,8% | 1,7% | 2.635 | 49,0% | 1,6% | -0,8% |
| ລາຍຮັບຈາກການຊ່ວຍເຫຼືອລ້າ | 1.244 | 45,2% | 0,8% | 479 | 23,2% | 0,3% | -61,5% |
| ລາຍຈ່າຍທັງໝົດ | 21.901 | 66,8% | 14,4% | 18.501 | 55,4% | 11,2% | -15,5% |
| ລາຍຈ່າຍບໍລິຫານປົກກະຕິ | 12.701 | 63,0% | 8,3% | 13.370 | 61,0% | 8,1% | 5,3% |
| ລາບຈ່າຍລົງທຶນຂອງລັດ | 9.200 | 72,7% | 6,0% | 5.131 | 44,7% | 3,1% | -44,2% |
| ດຸ່ນດ່ຽງລາຍຮັບພາຍໃນ/ລາຍຈ່າຍບໍລິຫານ | 2.062 | 108,5% | 1,4% | 2.292 | 103,6% | 1,4% | 11,1% |
| ດຸ່ນດ່ຽງລວມ | -5.893 | 73,7% | -3,9% | -2.361 | 32,8% | -1,4% | -59,9% |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກໍາ

### 1) ການຈັດຕັ້ງປະຕິບັດລາຍຮັບຈາກພາສີ-ອາກອນ

ລາຍຮັບຈາກພາສີ-ອາກອນ ຖືວ່າເປັນລາຍຮັບຫຼັກຂອງລາຍຮັບພາຍໃນ ແລະ ມີແນວໂນ້ມເພີ່ມຂຶ້ນໃນແຕ່ລະປີ. ມາຮອດໄລຍະ 9 ເດືອນ ປີ 2019, ສາມາດປະຕິບັດໄດ້ 13.027 ຕື້ກີບ (ທຽບໄດ້ 69,5% ຂອງແຜນງົບປະມານ ຫຼື ເທົ່າກັບ 7,9% ຂອງ GDP) ຊຶ່ງເພີ່ມຂຶ້ນ 7,6% ທຽບໃສ່ໄລຍະດຽວກັນຂອງປີ 2018. ໃນນີ້ແຫຼ່ງລາຍຮັບຕົ້ນຕໍແມ່ນມາຈາກ ອາກອນມູນຄ່າເພີ່ມ ກວມເອົາ 33,5%, ອາກອນຊົມໃຊ້ ກວມເອົາ 28,5%, ອາກອນກໍາໄລ ກວມເອົາ 9,9%, ອາກອນລາຍໄດ້ ກວມເອົາ 9,2% ຂອງລາຍຮັບຈາກພາສີ-ອາກອນທັງໝົດ (ຕາຕະລາງ 2).

ຕາຕະລາງ 2: ການຈັດຕັ້ງປະຕິບັດລາຍຮັບພາຍໃນ ແຍກຕາມປະເພດລາຍຮັບ ໄລຍະ 9 ເດືອນ ປີ 2018 ແລະ 2019

(ຫົວໜ່ວຍ ຕື້ກີບ)

| ລ/ດ | ເນື້ອໃນ | ມັງກອນ-ກັນຍາ 2018 | ອັດຕາສ່ວນ | ມັງກອນ-ກັນຍາ 2019 | ອັດຕາສ່ວນ | % ເພີ່ມຫຼືຫຼຸດ |
|---|---|---|---|---|---|---|
| I | **ລາຍຮັບຈາກພາສີ-ອາກອນ** | **12.109** | **100,0** | **13.027** | **100,0** | **7,6** |
| 1 | ອາກອນກຳໄລ | 1.236 | 10,2 | 1.293 | 9,9 | 4,6 |
| 2 | ອາກອນລາຍໄດ້ | 1.169 | 9,7 | 1.200 | 9,2 | 2,7 |
| 3 | ພາສີທີ່ດິນ | 171 | 1,4 | 174 | 1,3 | 1,7 |
| 4 | ອາກອນມູນຄ່າເພີ່ມ | 3.970 | 32,8 | 4.369 | 33,5 | 10,0 |
| 5 | ອາກອນຊົມໃຊ້ | 3.430 | 28,3 | 3.713 | 28,5 | 8,3 |
| 6 | ພາສີຂາເຂົ້າ | 723 | 6,0 | 768 | 5,9 | 6,2 |
| 7 | ພາສີຂາອອກ | 23 | 0,2 | 32 | 0,2 | 36,8 |
| 8 | ຄ່າທຳນຽມຈົດທະບຽນ | 25 | 0,2 | 8 | 0,1 | -66,5 |
| 9 | ຄ່າທຳນຽມຕ່າງໆ | 552 | 4,6 | 649 | 5,0 | 17,7 |
| 10 | ຄ່າຊັບພະຍາກອນທຳມະຊາດ | 463 | 3,8 | 476 | 3,7 | 2,6 |
| 11 | ຄ່າພາກຫຼວງຈາກໄມ້ | 33 | 0,3 | 9 | 0,1 | -71,3 |
| 12 | ຄ່າພາກຫຼວງຈາກໄຟຟ້າ | 314 | 2,6 | 334 | 2,6 | 6,6 |
| II | **ລາຍຮັບທີ່ບໍ່ແມ່ນພາສີ-ອາກອນ** | **2.655** | **100,0** | **2.635** | **100,0** | **-0,8** |
| 1 | ຄ່າເຊົ່າຊັບສິນຂອງລັດ | 27 | 1,0 | 27 | 1,0 | 1,0 |
| 2 | ຄ່າສຳປະທານ | 62 | 2,3 | 63 | 2,4 | 1,7 |
| 3 | ຄ່າປັບໃໝ | 33 | 1,2 | 19 | 0,7 | -40,9 |
| 4 | ລາຍຮັບບໍລິຫານວິຊາການ | 517 | 19,5 | 387 | 14,7 | -25,2 |
| 5 | ເງິນປັນຜົນກຳໄລ | 840 | 31,6 | 847 | 32,2 | 0,9 |
| 6 | ດອກເບ້ຍເງິນກູ້ | 531 | 20,0 | 567 | 21,5 | 6,7 |
| 7 | ຄ່າບິນຜ່ານ | 605 | 22,8 | 653 | 24,8 | 7,8 |
| 8 | ກອງທຶນ | 1 | 0,0 | 18 | 0,7 | 1.470,5 |
| 9 | ລາຍຮັບອື່ນໆ | 38 | 1,4 | 53 | 2,0 | 39,3 |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

### 2) ລາຍຮັບທີ່ບໍ່ແມ່ນພາສີອາກອນ

ການຈັດຕັ້ງປະຕິບັດລາຍຮັບທີ່ບໍ່ແມ່ນພາສີອາກອນບັນລຸ 2.635 ຕື້ກີບ (ທຽບໄດ້ 49,0% ຂອງແຜນງົບປະມານ ຫຼື 1,6% ຂອງ GDP) ຊຶ່ງຖືວ່າປະຕິບັດຫຼຸດລົງເລັກນ້ອຍ ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2018 (2.655 ຕື້ກີບ). ໃນບັນດາແຫຼ່ງລາຍຮັບດັ່ງກ່າວປະກອບມີ ເງິນປັນຜົນ ກວມເອົາ 32,2%, ຄ່າບິນຜ່ານ ກວມເອົາ 24,8%, ດອກເບ້ຍເງິນກູ້ ກວມເອົາ 21,5%, ລາຍຮັບບໍລິຫານວິຊາການ ກວມເອົາ 14,7%, ຄ່າສຳປະທານ ກວມເອົາ 2,4%, ລາຍຮັບຈາກຄ່າເຊົ່າ ກວມເອົາ 1,0%, ຄ່າປັບໃໝ ກວມເອົາ 0,7%, ລາຍຮັບຈາກກອງທຶນ ກວມເອົາ 0,7% ແລະ ລາຍຮັບອື່ນໆ ກວມເອົາ 2,0% ຂອງລາຍຮັບທີ່ບໍ່ແມ່ນພາສີອາກອນ.

**ເສັ້ນສະແດງ 2:** ການຈັດຕັ້ງປະຕິບັດລາຍຮັບພາຍໃນໄລຍະ 9 ເດືອນ ປີ 2019 ທຽບໃສ່ ໄລຍະດຽວກັນຂອງປີທີ່ຜ່ານມາ (ຕື້ກີບ ແລະ ສ່ວນຮ້ອຍ (%) ທຽບໃສ່ GDP)




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**3) ລາຍຮັບຈາກການຊ່ວຍເຫຼືອລ້າ.**

ລາຍຮັບຈາກຊ່ວຍເຫຼືອລ້າ ມີຈັງຫວະຫຼຸດລົງໃນແຕ່ລະປີ, ເນື່ອງຈາກເສດຖະກິດຂອງ ສປປ ລາວ ມີການຂະຫຍາຍຕົວດີຂຶ້ນ. ຈຶ່ງເຮັດໃຫ້ການຊ່ວຍເຫຼືອລ້າຈາກຕ່າງປະເທດຫຼຸດລົງ ໂດຍຄ່ອຍປ່ຽນຮູບແບບການຊ່ວຍເຫຼືອມາເປັນໃຫ້ກູ້ຢືມແບບຜ່ອນຜັນຫຼາຍຂຶ້ນ.

ໃນໄລຍະ 9 ເດືອນ ປີ 2019 ລາຍຮັບຈາກການຊ່ວຍເຫຼືອລ້າ ປະຕິບັດໄດ້ 479 ຕື້ກີບ, ເທົ່າກັບ 23,2% ຂອງແຜນການປີ ແລະ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ 61,5%; ສາເຫດຂອງການຫຼຸດລົງສ່ວນໜຶ່ງກໍ່ແມ່ນບໍ່ທັນມີເລກສະຫຼຸບລາຍຮັບຈາກການຊ່ວຍເຫຼືອລ້າ ທີ່ກະຊວງແຜນການ ແລະ ການລົງທຶນຄຸ້ມຄອງ ແລະ ຍັງບໍ່ທັງມີການຊ່ວຍເຫຼືອລ້າດັດແກ້ມະຫາພາກ.

**ເສັ້ນສະແດງ 3:** ລາຍຮັບຈາກການຊ່ວຍເຫຼືອລ້າ ໄລຍະ 9 ເດືອນ ປີ 2019 ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ (ຕື້ກີບ ແລະ ສ່ວນຮ້ອຍ (%) ທຽບໃສ່ GDP)




**ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ**

## III. ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານທັງໝົດປະຈຳ 9 ເດືອນ ປີ 2019

ໃນໄລຍະ 9 ເດືອນ ປີ 2019, ການຈັດຕັ້ງປະຕິບັດລາຍຈ່າຍງົບປະມານທັງໝົດ ສາມາດປະຕິບັດໄດ້ 18.501 ຕື້ກີບ (ທຽບໄດ້ 11,2% ຂອງ GDP ແລະ ເທົ່າກັບ 55,4% ຂອງແຜນງົບປະມານ) ຊຶ່ງໄດ້ຫຼຸດລົງ 15,5% ຈາກໄລຍະດຽວກັນໃນປີ 2018. ລາຍຈ່າຍບໍລິຫານປົກກະຕິ ບັນລຸ 13.370 ຕື້ກີບ (ເທົ່າ 61.0% ຂອງແຜນງົບປະມານ ທຽບເທົ່າ 8,1% ຂອງ GDP), ກວມເອົາ 72,3% ຂອງລາຍຈ່າຍທັງໝົດ ແລະ ເພີ່ມຂຶ້ນ 5,3% ເມື່ອທຽບກັບໄລຍະດຽວກັນຂອງປີ 2018. ລາຍຈ່າຍລົງທຶນຂອງລັດບັນລຸ 5,131 ຕື້ກີບ (ເທົ່າ 44,7% ຂອງແຜນງົບປະມານ ຫຼື 3,1% ຂອງ GDP), ກວມເອົາ 27,7% ຂອງລາຍຈ່າຍທັງໝົດ ແລະ ຫຼຸດລົງ 44.2% ເມື່ອທຽບກັບໄລຍະດຽວກັນຂອງປີ 2018 ເນື່ອງຈາກ ລາຍຈ່າຍລົງທຶນຕ່າງປະເທດທີ່ຕິດພັນກັບໂຄງການກູ້ຢືມຍັງບໍ່ທັນເບີກຈ່າຍ ແລະ ບໍ່ທັນມີຂໍ້ມູນບົດສະຫຼຸບການລົງທຶນຕ່າງປະເທດທີ່ຕິດພັນກັບການຊ່ວຍເຫຼືອລ້າທີ່ບໍ່ຕິດພັນກັບໂຄງການ.

### 3.1. ລາຍຈ່າຍບໍລິຫານປົກກະຕິ

ລາຍຈ່າຍບໍລິຫານປົກກະຕິ ທຽບໃສ່ GDP ໃນໄລຍະ 9 ເດືອນປີ 2019 ມີທ່າອ່ຽງເພີ່ມຂຶ້ນ ເມື່ອທຽບໃສ່ໄລຍະດຽວກັນຂອງປີ 2018, ຊຶ່ງປະຕິບັດໄດ້ 13.370 ຕື້ກີບ ທຽບເທົ່າກັບ 8,1% ຂອງ GDP, ຊຶ່ງປະກອບດ້ວຍລາຍຈ່າຍຕ່າງໆຄື: ເງິນເດືອນ ແລະ ເງິນອຸດໜູນ ກວມເອົາ 56,8%, ຊຳລະດອກເບ້ຍ ກວມເອົາ 16,0% ບໍລິຫານ ແລະ ຊື້ ໃໝ່ ກວມເອົາ 12,4%, ເງິນນະໂຍບາຍ ກວມເອົາ 8,0%, ລາຍຈ່າຍດັດສົມສິ່ງເສີມ ກວມເອົາ 6,1% ແລະ ລາຍຈ່າຍອື່ນໆ ກວມເອົາ 0,7% ຂອງລາຍຈ່າຍບໍລິຫານປົກກະຕິທັງໝົດ (ເສັ້ນສະແດງ 4 ແລະ ຕາຕະລາງ 3).

**ເສັ້ນສະແດງ 4:** ລາຍຈ່າຍບໍລິຫານປົກກະຕິໄລຍະ 9 ເດືອນຕົ້ນປີຂອງປີ 2019 ທຽບໃສ່ທີ່ປີຜ່ານມາ (ຕື້ກີບ ແລະ ສ່ວນຮ້ອຍ (%) ທຽບໃສ່ GDP)




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

### 3.2. ລາຍຈ່າຍລົງທຶນ

ລາຍຈ່າຍລົງທຶນຂອງລັດປະຕິບັດໄດ້ 5.131 ຕື້ກີບ (ທຽບໄດ້ 3,1% ຂອງ GDP ຫຼື 44,7% ຂອງແຜນງົບປະມານ) ຫຼຸດລົງ 44,2% ທຽບກັບໄລຍະດຽວກັນຂອງປີ 2018. ໃນນັ້ນ ລາຍຈ່າຍລົງທຶນຕ່າງປະເທດ ກວມເອົາສັດສ່ວນ 55,0% ຂອງ ລາຍຈ່າຍລົງທຶນຂອງລັດທັງໝົດ ຊຶ່ງ ຫຼຸດລົງຈາກ ໄລຍະດຽວກັນຂອງປີ 2018 ທີ່ກວມເອົາສັດສ່ວນເຖິງ 72,0% (ເນື່ອງຈາກບໍ່ທັນມີຂໍ້ມູນລາຍຈ່າຍລົງທຶນຈາກຊ່ວຍເຫຼືອລ້າທີ່ກະຊວງແຜນການ ແລະ ການລົງທຶນ ຄຸ້ມຄອງ); ລາຍຈ່າຍລົງທຶນພາຍໃນ ກວມເອົາສັດສ່ວນ 45,0% ຊຶ່ງເພີ່ມຈາກໄລຍະດຽວກັນຂອງປີ 2018 ທີ່ກວມເອົາ 28,0% ຂອງ ລາຍຈ່າຍລົງທຶນຂອງລັດທັງໝົດ (ເສັ້ນສະແດງ 5)

**ເສັ້ນສະແດງ 5:** ລາຍຈ່າຍລົງທຶນໄລຍະ 9 ເດືອນ ປີ 2019 ທຽບໃສ່ທີ່ປີຜ່ານມາ (ຕື້ກີບ ແລະ ສ່ວນຮ້ອຍ (%) ທຽບໃສ່ GDP)




ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

**ຕາຕະລາງ 3:** ການຈັດຕັ້ງປະຕິບັດລາຍຈ່າຍ ໃນໄລຍະ 9 ເດືອນ ປີ 2019 ທຽບກັບໄລຍະດຽວກັນໃນປີ 2018

(ຫົວໜ່ວຍ: ຕື້ກີບ)

| ລ/ດ | ເນື້ອໃນ | ມັງກອນ-ກັນຍາ 2018 | ອັດຕາສ່ວນ | ມັງກອນ- ກັນຍາ 2019 | ອັດຕາສ່ວນ | % ເພີ່ມ ຫຼື ຫຼຸດ |
|---|---|---|---|---|---|---|
| 1 | ເງິນເດືອນ ແລະ ເງິນອຸດໜູນ | 7.444 | 58,6 | 7.595 | 56,8 | 2,0 |
| 2 | ລາຍຈ່າຍນະໂຍບາຍ ແລະ ດັດສົມສົ່ງເສີມ | 1.706 | 13,4 | 1.889 | 14,1 | 10,7 |
| | ນະໂຍບາຍ ແລະ ຊ່ວຍໜູນອື່ນໆ | 1.013 | 8,0 | 1.071 | 8,0 | 5,7 |
| | ດັດສົມທົ່ວໄປ | 664 | 5,2 | 762 | 5,7 | 14,7 |
| | ປະກອບສ່ວນອົງການຈັດຕັ້ງສາກົນ | 29 | 0,2 | 56 | 0,4 | 94,1 |
| 3 | ບໍລິຫານ ແລະ ຊື້ໃໝ່ | 1.696 | 13,4 | 1.655 | 12,4 | -2,4 |
| 4 | ຊຳລະດອກເບ້ຍ | 1.826 | 14,4 | 2.142 | 16,0 | 17,3 |
| | ຕ່າງປະເທດ | 1.522 | 12,0 | 1.798 | 13,4 | 18,2 |
| | ພາຍໃນ | 305 | 2,4 | 345 | 2,6 | 13,1 |
| 5 | ລາຍຈ່າຍອື່ນໆ | 29 | 0,2 | 88 | 0,7 | 200,2 |
| | ເງິນແຮ | 29 | 0,2 | 43 | 0,3 | 45,3 |
| | ຄັງສະສົມແຫ່ງລັດ | 12.701 | 100,0 | 13.370 | 100,0 | 5,3 |
| * | <u>ລາຍຈ່າຍບໍລິຫານປົກກະຕິ</u> | 9.200 | 100,0 | 5.131 | 100,0 | -44,2 |
| * | <u>ລາຍຈ່າຍລົງທຶນຂອງລັດ</u> | 2.574 | 28,0 | 2.311 | 45,0 | -10,2 |
| 1 | ລົງທຶນພາຍໃນ | 6.625 | 72,0 | 2.820 | 55,0 | -57,4 |
| 2 | ລົງທຶນຕ່າງປະເທດ | 5.634 | 61,2 | 2.341 | 45,6 | -58,4 |
| | ກູ້ຢືມເປັນໂຄງການ | 479 | 5,2 | 479 | 9,3 | -0,1 |
| | ຊ່ວຍເຫຼືອລ້າເປັນໂຄງການ | 511 | 5,6 | - | - | -100,0 |
| | ຊ່ວຍເຫຼືອລ້າບໍ່ເປັນໂຄງການ | 21.901 | | 18.501 | | -15,5 |
| | <u>ລວມຍອດລາຍຈ່າຍ</u> | 7.444 | 58,6 | 7.595 | 56,8 | 2,0 |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກຳ

<u>**ໝາຍເຫດ:**</u> ລາຍຈ່າຍລົງທຶນຕ່າງປະເທດ ຕິດພັນກັບເງິນຊ່ວຍເຫຼືອລ້າທີ່ບໍ່ເປັນໂຄງການ ທີ່ກະຊວງແຜນການ ແລະ ການລົງທຶນຄຸ້ມຄອງ ແມ່ນບໍ່ທັນມີບົດສະຫຼຸບ 9 ເດືອນ ປີ 2019 ເທື່ອ.

## IV. ດຸນງົບປະມານ

ໃນໄລຍະ 9 ເດືອນຕົ້ນປີ 2019, ດຸນງົບປະມານລວມ (ລວມຍອດລາຍຮັບທັງໝົດ ຫັກລົບກັບ ລວມຍອດລາຍຈ່າຍທັງໝົດ) ຂາດດຸນປະມານ -2.361 ຕື້ກີບ (ທຽບໄດ້ -1,4% ຂອງ GDP) ເມື່ອທຽບກັບໄລຍະດຽວກັນຂອງ ປີ 2018 ທີ່ຂາດດຸນງົບປະມານ 3,9% ຂອງ GDP, ສາເຫດຂອງດຸນງົບປະມານ ໄລຍະ 9 ເດືອນ ຕົ້ນປີ ຂາດດຸນຫຼຸດລົງ ຍ້ອນລາຍຈ່າຍລົງທຶນທີ່ຫຼຸດລົງ (ລາຍຈ່າຍລົງທຶນຕ່າງປະເທດທີ່ຕິດພັນກັບໂຄງການກູ້ຢືມຍັງບໍ່ທັນເບີກຈ່າຍ ແລະ ບໍ່ທັນມີຂໍ້ມູນບົດສະຫຼຸບການລົງທຶນຕ່າງປະເທດທີ່ຕິດພັນກັບການຊ່ວຍເຫຼືອລ້າທີ່ບໍ່ຕິດພັນກັບໂຄງການ) ແລະ ລາຍຮັບພາຍໃນ ໂດຍສະເພາະແມ່ນ ລາຍຮັບຈາກພາສີ-ອາກອນ ທີ່ເພີ່ມຂຶ້ນ.

ພ້ອມນັ້ນ, ລັດຖະບານໄດ້ພະຍາຍາມລະດົມທຶນ ແລະ ພັດທະນາຕະຫຼາດພາຍໃນປະເທດ, ໂດຍສະເພາະອອກພັນທະບັດລັດຖະບານ ທີ່ ຕະຫຼາດຫຼັກຊັບ ເພື່ອມາດຸ່ນດ່ຽງງົບປະມານໃຫ້ໄດ້ຕາມສະພາແຫ່ງຊາດຮັບຮອງ ແລະ ເພື່ອຮອງຮັບກັບລ່າຍຈ່າຍ ໃນງວດ 4 ຂອງປີ 2019 ໃຫ້ທັນຕາມກຳນົດເວລາ. (ຕາຕະລາງ 4)

**ຕາຕະລາງ 4:** ການດຸ່ນດ່ຽງງົບປະມານແຫ່ງລັດໄລຍະ 9 ເດືອນຕົ້ນປີຂອງປີ 2019 (ຫົວໜ່ວຍ: ຕື້ກີບ)

| | ແຜນປີ 2019 | ປະຕິບັດໄດ້ | % ຕໍ່ ແຜນ ປີ 2019 | % ຕໍ່ GDP ປີ 2019 |
|---|---|---|---|---|
| **ລາຍຮັບທັງໝົດ** | 26.198 | 16.140 | 61,6 | 9,8 |
| ລາຍຮັບພາຍໃນ | 24.132 | 15.661 | 64,9 | 9,5 |
| ລາຍຮັບຈາກພາສີ-ອາກອນ | 18.754 | 13.027 | 69,5 | 7,9 |
| ລາຍຮັບບໍ່ແມ່ນພາສີອາກອນ | 5.379 | 2.635 | 49,0 | 1,6 |
| ລາຍຮັບຈາກການຊ່ວຍເຫຼືອລ້າ | 2.065 | 479 | 23,2 | 0,3 |
| ເງິນຊ່ວຍເຫຼືອລ້າທີ່ເປັນໂຄງການ | 581 | 479 | 82,4 | 0,3 |
| ເງິນຊ່ວຍເຫຼືອບໍ່ເປັນໂຄງການ | 1.233 | - | - | 0,0 |
| **ລວມຍອດລາຍຈ່າຍ** | 33.394 | 18.501 | 55,4 | 11,2 |
| **ລາຍຈ່າຍບໍລິຫານ** | 21.921 | 13.370 | 61,0 | 8,1 |
| **ລາຍຈ່າຍລົງທຶນ** | 11.473 | 5.131 | 44,7 | 3,1 |
| **ດຸ່ນດ່ຽງພາຍໃນຕໍ່ລາຍຈ່າຍບໍລິຫານ** | 2.212 | 2.292 | 103,6 | 1,4 |
| **ດຸ່ນດ່ຽງລວມ** | -7.196 | (2.361) | 32,8 | -1,4 |
| ດຸ່ນດ່ຽງລວມບໍ່ລວມເງິນຊ່ວຍເຫຼືອລ້າ | -9.262 | (2.839) | 30,7 | -1,7 |
| **ແຫຼ່ງດຸ່ນດ່ຽງງົບປະມານ** | 7.196 | 2.361 | 32,8 | 1,4 |
| **ແຫຼ່ງທຶນພາຍໃນ** | 1.072 | (542) | -50,5 | -0,3 |
| **ດຸ່ນດ່ຽງຈາກທະນາຄານ** | 1.024 | (548) | -53,5 | -0,3 |
| ເງິນຝາກລັດຖະບານ | - | (1.345) | | -0,8 |
| ພັນທະບັດຄັງເງິນ | 3.932 | 2.505 | 63,7 | 1,5 |
| ຊຳລະຕົ້ນທຶນພັນທະບັດ | -4.332 | (2.562) | 59,1 | -1,5 |
| ພັນທະບັດລັດຖະບານ | 2.424 | 1.524 | 62,9 | 0,9 |
| ຊຳລະຕົ້ນທຶນພັນທະບັດລັດຖະບານ | -1.000 | (670) | 67,0 | -0,4 |
| **ແຫຼ່ງອື່ນທີ່ບໍ່ແມ່ນທະນາຄານ** | 48 | 6 | 13,3 | 0,0 |
| ຂາຍຊັບສິນຂອງລັດ | 48 | 256 | 535,1 | 0,2 |
| ຊຳລະພັນທະບັດລັດຖະບານ | - | (249) | | -0,2 |
| ສ່ວນຜິດດ່ຽງ | 6.125 | 2.902 | 47,4 | 1,8 |

| | ແຜນປີ 2019 | ປະຕິບັດໄດ້ | % ຕໍ່ ແຜນ ປີ 2019 | % ຕໍ່ GDP ປີ 2019 |
|---|---|---|---|---|
| **ແຫຼ່ງທຶນຈາກຕ່າງປະເທດ** | 2.550 | - | - | 0,0 |
| ອອກພັນທະບັດລັດຖະບານຢູ່ຕ່າງປະເທດ | 765 | 348 | 45,4 | 0,2 |
| ເງິນກູ້ຢືມດັດແກ້ມະຫາພາກ | 2.650 | 1.286 | 48,5 | 0,8 |
| ເງິນກູ້ເພື່ອມາດູ່ນດ່ຽງ | 5.300 | 2.341 | 44,2 | 1,4 |
| ເງິນກູ້ຢືມເປັນໂຄງການ | -5.200 | (1.816) | 34,9 | -1,1 |
| ຊໍາລະຕົ້ນທຶນເງິນກູ້ຕ່າງປະເທດ | 60 | 744 | 1.243,3 | 0,4 |
| ຮັບຈາກການຊໍາລະຕົ້ນທຶນເງິນກູ້ຢືມຕໍ່ | 26.198 | 16.140 | 61,6 | 9,8 |

ແຫຼ່ງຂໍ້ມູນ: ກົມນະໂຍບາຍການເງິນ ແລະ ນິຕິກໍາ